**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

======00======

**ສຳນັກງານນາຍົກລັດຖະມົນຕີ** ເລກທີ 145 / ນຍ.

ນະຄອນຫລວງວຽງຈັນ, ວັນທີ 31.07.2006

# ດຳລັດ

## ວ່າດ້ວຍການປະກາດໃຊ້ ແລະ ຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2006-2007

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6/5/2003.
- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຊຶ່ງປະກາດໃຊ້ໂດຍລັດຖະບັນຍັດ ຂອງປະທານປະເທດແຫ່ງ ສປປ ລາວ ສະບັບເລກທີ 40 /ສປປ, ລົງວັນທີ 13 /08/ 1994.
- ອີງຕາມ ມະຕິຂອງກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ VI, ສະບັບເລກທີ 10 / ສພຊ-VI, ລົງວັນທີ 3 ກໍລະກົດ 2006 ວ່າດ້ວຍການຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2006-2007.

### ນາຍົກລັດຖະມົນຕີ ອອກດຳລັດ :

**ມາດຕາ 1.** ປະກາດໃຊ້ ແລະຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2006-2007, ເລີ້ມແຕ່ວັນທີ 01 ຕຸລາ ປີ 2006 ເຖິງວັນທີ 30 ກັນຍາ ປີ 2007 ຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ.

**ມາດຕາ 2.** ແຜນພັດທະນາເສດຖະກິດ - ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2006-2007 ແມ່ນແຜນຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ, ມະຕິກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ VI ໃຫ້ປະກົດຜົນເປັນຈິງ, ໂດຍມີທິດທາງ ແລະ ໜ້າທີ່, ບັນດາຄາດໝາຍຕົ້ນຕໍ ແລະ ການດຸ່ນດ່ຽງໃຫຍ່ໆ ຂອງເສດຖະກິດມະຫາພາກ; ຄາດໝາຍການລຶບລ້າງຄວາມທຸກຍາກ ແລະ ຫລຸດຜ່ອນການຖາງປ່າ-ເຮັດໄຮ່; ກຳນົດໂຄງປະກອບການພັດທະນາຕາມຂະແໜງການ ແລະ ການພັດທະນາເຂດແຄວ້ນ; ກຳນົດແຜນງານໂຄງການ, ແຜນເງິນ, ແຜນຄົນ, ບັນດາມາດຕະການ ແລະ ວິທີການຕົ້ນຕໍ ເພື່ອຈັດຕັ້ງປະຕິບັດຈຸດໝາຍລວມ, ທິດທາງ ແລະ ຄາດໝາຍສູ້ຊົນ ທີ່ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI ( 2006-2010 ) .

**ມາດຕາ 3. ຄາດໝາຍສູ້ຊົນ ດ້ານເສດຖະກິດມະຫາພາກ ໃນສົກປີ 2006-2007 ມີດັ່ງນີ້ :**

- ລວມຍອດຜະລິດຕະພັນພາຍໃນ (GDP) ທຽບໃສ່ສົກປີ 2005-2006 ເພີ່ມຂຶ້ນ 7,5% ( ເປັນມູນຄ່າໃນປີປະມານ 37.926 ຕື້ກີບ ) ໃນນັ້ນ :
  - + ຍອດຜະລິດຕະພັນກະສິກຳ-ປ່າໄມ້ ໃຫ້ເພີ່ມຂຶ້ນ 3,4% ກວມເອົາ 41,9% ຂອງ GDP.
  - + ຍອດຜະລິດຕະພັນອຸດສາຫະກຳ ໃຫ້ເພີ່ມຂຶ້ນ 13,2% ກວມເອົາ 32,0% ຂອງ GDP.
  - + ການບໍລິການ ໃຫ້ເພີ່ມຂຶ້ນ 7,9% ກວມເອົາ 26,1% ຂອງ GDP.
- GDP ສະເລ່ຍໃສ່ຫົວຄົນ ປະມານ 6,5 ລ້ານກີບ ຫລື ເທົ່າກັບປະມານ 591 ໂດລາ, ທຽບໃສ່ສົກປີຜ່ານມາ ເພີ່ມຂຶ້ນ 7,6% .
- ລວມຍອດລາຍຮັບງົບປະມານທັງໝົດ ໃຫ້ໄດ້ 5.531 ຕື້ກີບ ຫລື ເທົ່າກັບ 14,58% ຂອງGDP, ໃນນັ້ນ ເກັບລາຍຮັບງົບປະມານພາຍໃນ ໃຫ້ໄດ້ 4.850 ຕື້ກີບ ຫຼື ເທົ່າກັບ 12,79% ຂອງ GDP, ທຽບໃສ່ສົກປີຜ່ານມາເພີ່ມຂຶ້ນ 18,29%; ລາຍຈ່າຍບໍ່ໃຫ້ເກີນ 7.913 ຕື້ກີບ ເທົ່າກັບ 20,9% ຂອງ GDP ທຽບໃສ່ປີຜ່ານມາເພີ່ມຂຶ້ນ 7,08%; ພະຍາຍາມຮັກສາການຂາດດຸນງົບປະມານພາຍໃນໃຫ້ຢູ່ໃນລະດັບ 6,28% ຂອງ GDP ເທົ່າກັບ 2.382 ຕື້ກີບ ຫຼຸດລົງ 13,51% ທຽບໃສ່ສົກປີຜ່ານມາ.
- ຄວບຄຸມອັດຕາເງິນເຟີ້ໃຫ້ຢູ່ໃນລະດັບຕົວເລກດຽວ ແລະ ຄວບຄຸມອັດຕາແລກປ່ຽນໃຫ້ມີຄວາມສະຫງົບ ແລະ ມີສະຖຽນລະພາບໂດຍພື້ນຖານ; ຄວບຄຸມການເພີ່ມຂຶ້ນຂອງບໍລິມາດເງິນລວມ ( M2 ) ບໍ່ໃຫ້ເກີນ 18% ທຽບໃສ່ປີຜ່ານມາ.
- ສູ້ຊົນບັນລຸຂາອອກໃຫ້ໄດ້ 652,9 ລ້ານໂດລາສະຫະລັດ; ການນຳເຂົ້າບໍ່ໃຫ້ເກີນ 977,9 ລ້ານໂດລາສະຫະລັດ; ຄວບຄຸມການຂາດດຸນຊຳລະສະສາງປົກກະຕິກັບຕ່າງປະເທດ ໃຫ້ຢູ່ໃນລະດັບທີ່ຄຸ້ມຄອງໄດ້.
- ພະຍາຍາມລະດົມໃຫ້ມີການລົງທຶນທົ່ວສັງຄົມ ກວມປະມານ 30-32% ຂອງ GDP, ໃນນີ້ການລົງທຶນຂອງລັດກວມເອົາປະມານ 10% ຂອງ GDP ຫຼື ເທົ່າກັບ 3.790 ຕື້ກີບ ໃນນັ້ນ: ທຶນພາຍໃນ 517 ຕື້ກີບ, ທຶນລັດວິສາຫະກິດ 437 ຕື້ກີບ ແລະ ທຶນຊ່ວຍເຫຼືອລ້າ-ກູ້ຢືມ 2.836 ຕື້ກີບ ແລະ ລະດົມການລົງທຶນຂອງປະຊາຊົນ, ທຸລະກິດເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ປະມານ 20-22% ຂອງ GDP ເທົ່າ ກັບ 8.210 ຕື້ກີບ ໃນນັ້ນ: ການລົງທຶນຕ່າງປະເທດ 6.000 ຕື້ກີບ ແລະ ທຶນຂອງປະຊາຊົນ 2.210 ຕື້ກີບ.
- ສູ້ຊົນຫຼຸດຜ່ອນອັດຕາສ່ວນຄວາມທຸກຍາກລົງໃຫ້ໄດ້ປະມານ 2-3% ໃນປີ 2006-2007, ຫຼຸດຜ່ອນເນື້ອທີ່ຖາງປ່າເຮັດໄຮ່ປູກເຂົ້າເລື່ອນລອຍ ຈາກ 22.400 ເຮັກຕາ ໃຫ້ຍັງເຫຼືອບໍ່ເກີນ 14.400 ເຮັກຕາ ແລະ ຫຼຸດຜ່ອນຄອບຄົວຖາງປ່າເຮັດໄຮ່ປູກເຂົ້າເລື່ອນລອຍຈາກ 32.790 ຄອບຄົວ ໃຫ້ຍັງເຫຼືອບໍ່ເກີນ 21.000 ຄອບຄົວ.
- ສູ້ຊົນຜະລິດເຂົ້າໃຫ້ໄດ້ 2.725.000 ໂຕນ.

ມາດຕາ 4. ໃຫ້ສູ້ຊົນປະຕິບັດແຜນລາຍຮັບ ແລະ ລາຍຈ່າຍງົບປະມານປະຈຳປີ ຕາມຕົວເລກທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ ໃຫ້ປະກົດເປັນຈິງ ຄື :

4.1 ລວມຍອດລາຍຮັບທັງຫມົດ ( ນັບທັງທຶນຊ່ວຍເຫລືອລ້າ ) 5.531 ຕື້ກີບ , ໃນນັ້ນ ລາຍຮັບງົບປະມານພາຍໃນ 4.850 ຕື້ກີບ , ທຽບໃສ່ການປະຕິບັດໃນສົກປີຜ່ານມາ ເພີ່ມຂຶ້ນປະມານ 18,29% , ໃນນັ້ນ:

| | | |
|---|---|---|
| + ລາຍຮັບຈາກສ່ວຍສາອາກອນ | 2.033 | ຕື້ກີບ |
| + ລາຍຮັບຈາກພາສີຂາເຂົ້າຂາອອກ | 1.470 | ຕື້ກີບ |
| + ລາຍຮັບຈາກທີ່ດິນ | 53 | ຕື້ກີບ |
| + ລາຍຮັບຈາກຊັບສິນຂອງລັດ | 1.144 | ຕື້ກີບ |
| + ລາຍຮັບຈາກຊັບພະຍາກອນປ່າໄມ້ | 150 | ຕື້ກີບ |
| + ລາຍຮັບຈາກການຊ່ວຍເຫລືອລ້າ ຂອງຕ່າງປະເທດ ນັບທັງເປັນໂຄງການ ແລະ ບໍ່ເປັນໂຄງການ | 681 | ຕື້ກີບ |

4.2 ແຜນລາຍຈ່າຍງົບປະມານແຫ່ງລັດທັງໝົດແມ່ນ 7.913 ຕື້ກີບ ຫຼື ເທົ່າກັບ 20,8% ຂອງ GDP, ທຽບໃສ່ປີຜ່ານມາເພີ່ມຂຶ້ນ 7,07%. ລາຍຈ່າຍ ຕົ້ນຕໍ ໃນສົກປີ 2006-2007 ມີດັ່ງນີ້ :

| | | |
|---|---|---|
| 1. ລາຍຈ່າຍເງິນເດືອນ ແລະ ເງິນອຸດຫນູນ | 2.027 | ຕື້ກີບ |
| 2. ລາຍຈ່າຍບໍລິຫານ | 695 | ຕື້ກີບ |
| 3. ລາຍຈ່າຍດັດສົມສິ່ງເສີມ | 350 | ຕື້ກີບ |
| 4. ລາຍຈ່າຍເງິນແຮ ແລະ ບັງເອີນ | 50 | ຕື້ກີບ |
| 5. ລາຍຈ່າຍເງິນສະສົມຂອງລັດຖະບານ | 50 | ຕື້ກີບ |
| 6. ລາຍຈ່າຍໜີ້ສິນຕ່າງໆ | 1.388 | ຕື້ກີບ |
| + ຈ່າຍຊຳລະໜີ້ສິນຕ່າງປະເທດ | 798 | ຕື້ກີບ |
| + ຈ່າຍຊຳລະໜີ້ສິນພາຍໃນ | 370 | ຕື້ກີບ |
| + ຊຳລະຕົ້ນທຶນ ແລະ ດອກເບ້ຍພັນທະບັດ | 220 | ຕື້ກີບ |
| 7. ລາຍຈ່າຍການລົງທຶນຂອງລັດ | 3.353 | ຕື້ກີບ |
| + ທຶນຊ່ວຍເຫລືອ ແລະ ກູ້ຢືມຈາກຕ່າງປະເທດ | 2.836 | ຕື້ກີບ |
| + ຈ່າຍລົງທຶນພາຍໃນ, ໃນນັ້ນ: | 517 | ຕື້ກີບ |
| - ຈ່າຍລົງທຶນປົກກະຕິ | 447 | ຕື້ກີບ |
| - ຈ່າຍໂຄງການບູລະນະທາງຫຼວງແຫ່ງຊາດ | 60 | ຕື້ກີບ |
| - ຈ່າຍໂຄງການກອງທຶນບູລະນະປ່າໄມ້ | 10 | ຕື້ກີບ |

| | | |
|---|---|---|
| 4.3 ແຫລ່ງດຸ່ນດ່ຽງທັງຫມົດ: | 2.382 | ຕື້ກີບ |
| ໃນນັ້ນ: | | |
| - ກູ້ຢືມ ແລະ ຊ່ວຍເຫລືອຈາກຕ່າງປະເທດ | 2.239 | ຕື້ກີບ |
| - ພັນທະບັດຄັງເງິນ | 143 | ຕື້ກີບ |

**ມາດຕາ 5. ກ່ຽວກັບການແກ້ໄຂໜີ້ສິນ ໃນສົກປີ 2006-2007, ໃຫ້ປະຕິບັດດັ່ງນີ້:**

5.1 ໃຫ້ຄະນະກຳມະການແກ້ໄຂໜີ້ສິນລັດຖະບານຂັ້ນສູນກາງ ເກັບກຳບັນຊີໜີ້ສິນທັງໝົດໃຫ້ສຳເລັດ, ໂດຍແຍກໃຫ້ເຫັນລະອຽດ ອັນໃດແມ່ນໜີ້ໂຄງການລົງທຶນຂອງລັດ ອັນໃດແມ່ນໜີ້ບໍລິຫານ ເພື່ອຈັດເປັນປະເພດໜີ້ສິນ ແລະ ເປັນບູລິມະສິດໃນການແກ້ໄຂ ນັບແຕ່ສົກປີ 2006-2007 ເປັນຕົ້ນໄປ ແລ້ວນຳສະເໜີຕໍ່ລັດຖະບານຕົກລົງ.

5.2 ໃຫ້ຄະນະກຳມະການແກ້ໄຂໜີ້ສິນລັດຖະບານຂັ້ນສູນກາງ ເຊີນພາກສ່ວນທີ່ກ່ຽວຂ້ອງ, ໂດຍສະເພາະແມ່ນຂະແໜງການ ແລະ ທ້ອງຖິ່ນທີ່ມີໜີ້ສິນຫຼາຍ ພ້ອມທັງເຊີນເຈົ້າໜີ້ລາຍໃຫຍ່ ຈັດກອງປະຊຸມວິຊາການເພື່ອຊອກຊ່ອງທາງແກ້ໄຂຮ່ວມກັນ ລະຫວ່າງລັດຖະບານ ແລະ ເຈົ້າໜີ້ພາຍໃນ; ສຳລັບໜີ້ທີ່ນອນໃນແຜນ, ໝາຍເຖິງໂຄງການໃຊ້ໜີ້ທີ່ສະພາແຫ່ງຊາດຮັບຮອງແລ້ວ, ຊຶ່ງເປັນໂຄງການທີ່ສ້າງສຳເລັດ ແລະ ນຳໃຊ້ແລ້ວ ແມ່ນໃຫ້ຍົກສູງຄວາມຮັບຜິດຊອບໃນການຊຳລະສະສາງ ແລະ ບໍ່ໃຫ້ຍົກຍ້າຍໄປໃສ່ຮ່ອງອື່ນຢ່າງເດັດຂາດ.

5.3 ສຳລັບໜີ້ໂຄງການນອກແຜນ ທີ່ບໍ່ໄດ້ຜ່ານສະພາແຫ່ງຊາດຮັບຮອງນັ້ນ, ໃຫ້ຄະນະກຳມະການແກ້ໄຂໜີ້ສິນລັດຖະບານຂັ້ນສູນກາງ ກວດກາ ແລະ ເກັບກຳຂຶ້ນບັນຊີໜີ້ສິນທັງໝົດໃຫ້ສຳເລັດ ແລ້ວຄົ້ນຄວ້າວິທີການແກ້ໄຂ, ຊອກຫາ ແລະ ຈັດສັນແຫຼ່ງທຶນເພື່ອຊຳລະຕ່າງຫາກ. ຫຼັງຈາກນັ້ນ ຈຶ່ງນຳສະເໜີແຜນການດັ່ງກ່າວ ໃຫ້ລັດຖະບານພິຈາລະນາຮັບຮອງເອົາສາກ່ອນ ຈຶ່ງຈັດຕັ້ງປະຕິບັດການຊຳລະສະສາງ.

5.4 ສຳລັບໜີ້ ທີ່ລັດຖະບານໄດ້ມອບໃຫ້ກະຊວງການເງິນ ເປັນຜູ້ຕິດຕາມ ແລະ ຮັບຜິດຊອບຊຳລະຜ່ານມານັ້ນ ແມ່ນໃຫ້ສືບຕໍ່ປະຕິບັດຕາມທີ່ໄດ້ຕົກລົງໄວ້ແລ້ວ.

5.5 ໃນສົກງົບປະມານປີ 2007-2008, ໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນຂຶ້ນແຜນຊຳລະໜີ້ໂຄງການລົງທຶນຂອງລັດ ບໍ່ໃຫ້ຫຼຸດ 30% ຂອງມູນຄ່າການລົງທຶນທີ່ສະເໜີມາ.

5.6 ຄຽງຄູ່ກັບການຂຶ້ນແຜນຊຳລະສະສາງໜີ້ຕ້ອງຈ່າຍນັ້ນ, ໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນເອົາໃຈໃສ່ເກັບກຳຂໍ້ມູນ ແລະ ເລັ່ງທວງເອົາໜີ້ຕ້ອງຮັບຂອງລັດຖະບານ.

**ມາດຕາ 6. ກ່ຽວກັບການຈັດຕັ້ງຜັນຂະຫຍາຍ 11 ແຜນງານໃຫຍ່ຂອງລັດຖະບານ, ໃຫ້ປະຕິບັດດັ່ງນີ້:**

6.1 ມອບໃຫ້ຄະນະເລຂາທິການຂອງລັດຖະບານ ສົມທົບກັບ ຄຜທ ຄົ້ນຄວ້າ ແລະ ກຳນົດອົງກອນ (ຄະນະກຳມະການ ຫຼື ກະຊວງ) ທີ່ຈະຮັບຜິດຊອບ ແລະ ຈັດຕັ້ງປະຕິບັດ ແຕ່ລະແຜນງານໃຫ້ຈະແຈ້ງ. ອົງກອນດັ່ງກ່າວຈະຕ້ອງ ລົງເລິກໃນການສ້າງເອກະສານ ສຳລັບແຕ່ລະໂຄງການ ລວມທັງບົດວິພາກຂອງແຕ່ລະໂຄງການ ( ຖ້າເຫັນວ່າຈຳເປັນ ) ເພື່ອກຳນົດແຜນປະຕິບັດງານ, ແຜນເງິນ, ແຜນຄົນ ແລະ ລຳດັບບູລິມະສິດ ໃນການຈັດຕັ້ງປະຕິບັດ ເພື່ອໃຫ້ລັດຖະບານຈັດເອົາເຂົ້າໃນແຜນແຕ່ລະປີ.

6.2 ໃຫ້ ຄຜທ ປະສານສົມທົບກັບກະຊວງການເງິນ ຄົ້ນຄວ້າຈັດສັນແຫລ່ງທຶນ, ຊຶ່ງສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ ເຂົ້າໃສ່ແຕ່ລະໂຄງການ ເພື່ອຈະສຸມໃສ່ແຜນງານ ຫລື ໂຄງການ ຕາມລຳດັບບຸລິມະສິດທີ່ໄດ້ກຳນົດ.

6.3 ໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນ ທີ່ຮັບຜິດຊອບແຕ່ລະແຜນງານ ຄົ້ນຄວ້າ ແລະ ປັບປຸງແຜນພັດທະນາຂອງຕົນ ໃຫ້ສອດຄ່ອງກັບ 11 ແຜນງານໃຫຍ່ຂອງລັດຖະບານດັ່ງກ່າວ, ດຳເນີນການຈັດຕັ້ງປະຕິບັດ

ແລະ ລາຍງານໃຫ້ຄະນະເລຂາທິການລັດຖະບານເປັນປົກກະຕິ ເພື່ອສະຫລຸບສັງລວມຜົນຂອງການຈັດຕັ້ງປະຕິບັດແຕ່ລະແຜນງານ ໃຫ້ລັດຖະບານຊາບ ແລະ ມີທິດຊີ້ນຳເປັນແຕ່ລະໄລຍະ.

**ມາດຕາ 7. ມອບໃຫ້ ຄະນະກຳມະການແຜນການ ແລະ ການລົງທຶນ ປະຕິບັດດັ່ງນີ້:**

7.1 ອອກແຈ້ງການແນະນຳ ໄປຍັງຂະແໜງການ ແລະ ທ້ອງຖິ່ນ ກ່ຽວກັບວິທີຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມສົກປີ 2006-2007 ຕາມທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ, ໂດຍສະເພາະແມ່ນແຜນໂຄງການລົງທຶນຂອງລັດ ຈຳນວນ 2.550 ໂຄງການ ລວມມູນຄ່າປະມານ 3.353 ຕື້ກີບ, ໃນນັ້ນ ທຶນພາຍໃນ 517 ຕື້ກີບ ແລະ ທຶນຕ່າງປະເທດ 2.836 ຕື້ກີບ, ໂດຍໃຫ້ປະຕິບັດຢ່າງເຂັ້ມງວດຕາມດຳລັດ ເລກທີ 58/ ນຍ ວ່າດ້ວຍການຄຸ້ມຄອງການລົງທຶນຂອງລັດ.

7.2 ຊຸກຍູ້, ຕິດຕາມກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດຢ່າງເປັນປົກກະຕິ ໂດຍສະເພາະ ແມ່ນຢູ່ບັນດາທ້ອງຖິ່ນທີ່ມີຄວາມຫຍຸ້ງຍາກໃນດ້ານບຸກຄະລາກອນ ແລະ ໃນການຄຸ້ມຄອງໂຄງການ. ໃນກໍລະນີຈຳເປັນ ກໍໃຫ້ຈັດຕັ້ງເອົາພະນັກງານວິຊາການທີ່ມີປະສົບການ ລົງຊ່ວຍນຳພາຈັດຕັ້ງປະຕິບັດ.

7.3 ເປັນເຈົ້າການປະສານສົມທົບ ກັບກະຊວງການເງິນ; ທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ຕິດຕາມການຈັດຕັ້ງປະຕິບັດ ບັນດາຄາດໝາຍເສດຖະກິດມະຫາພາກ, ຄົ້ນຄວ້າວິທີການ ແລະ ມາດຕະການດັດສົມທີ່ຄົບຊຸດ ເພື່ອໃຫ້ບັນລຸຜົນຕາມທີ່ໄດ້ກຳນົດໃນມະຕິຕົກລົງ ຂອງສະພາແຫ່ງຊາດ.

7.4 ໃຫ້ສົມທົບກັບກະຊວງການເງິນ ຄົ້ນຄວ້າລະບຽບການ ແລະ ຂັ້ນຕອນ ກ່ຽວກັບວິທີຊຳລະໂຄງການລົງທຶນຂອງລັດຄືນໃໝ່ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ສາມາດຄຸ້ມຄອງໄດ້ ແລ້ວເຜີຍແຜ່ແນະນຳໃຫ້ຂະແໜງການ ແລະ ທ້ອງຖິ່ນປະຕິບັດຢ່າງເຂັ້ມງວດ.

7.5 ໃຫ້ຄົ້ນຄວ້າ ແລະ ວິໄຈ ເພື່ອກຳນົດຂອບເສດຖະກິດມະຫາພາກ ແລະ ຂອບການລົງທຶນຂອງລັດ ສົກປີ 2007-2008 ແລ້ວ ນຳສະເໜີຕໍ່ລັດຖະບານ ໃນງວດ II ສົກປີ 2006-2007. ຫຼັງຈາກນັ້ນ ໃຫ້ອີງໃສ່ດຳລັດສະບັບນີ້ ເຮັດແຈ້ງການເຖິງຂະແໜງການ ແລະ ທ້ອງຖິ່ນ ກ່ຽວກັບການສ້າງແຜນການ ສົກປີ 2007-2008 .

7.6 ປັບປຸງເນື້ອໃນຂອງດຳລັດເລກທີ 58/ນຍ ແລະ 135/ນຍ ກ່ຽວກັບຂະບວນການ, ຂັ້ນຕອນ ແລະ ວິທີການສ້າງແຜນການ ແລະ ໂຄງການລົງທຶນຂອງລັດ ໃຫ້ສອດຄ່ອງ ກັບກົນໄກການພິຈາລະນາ ແລະ ຮັບຮອງຂອງລັດຖະບານ ແລະ ສະພາແຫ່ງຊາດຄືນໃໝ່ ແລ້ວນຳສະເໜີຕໍ່ລັດຖະບານພິຈາລະນາໃນງວດ I ສົກປີ 2006-2007.

7.7 ເປັນເຈົ້າການປະຕິບັດແຜນຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ , ເປັນຕົ້ນແມ່ນຈັດສັນໂຄງການລົງທຶນ ຂອງບັນດາຂະແໜງການ ແລະ ທ້ອງຖິ່ນທີ່ສະເໜີມາ ໃຫ້ປິ່ນອ້ອມ ແລະ ສອດຄ່ອງກັບ 11 ແຜນງານບູລິມະ ສິດຂອງລັດຖະບານ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2006-2010); ຄົ້ນຄວ້າ ວາງຂອບເພດານການລົງທຶນ ເລີ່ມແຕ່ແຜນການສົກປີ 2007-2008 ເປັນຕົ້ນໄປ.

7.8 ເຜີຍແຜ່ຜົນຂອງການສຳຫລວດພົນລະເມືອງ ແລະ ທີ່ຢູ່ອາໃສ ຄັ້ງທີ III ເພື່ອໃຫ້ພາກສ່ວນຕ່າງໆນຳໄປຄົ້ນຄວ້າ ແລະ ນຳໃຊ້ເຂົ້າໃນການວາງແຜນ ແລະ ວຽກງານອື່ນໆທີ່ຈຳເປັນຂອງຕົນ ໃຫ້ແທດເໝາະ

ກັບສະພາບຕົວຈິງ; ພ້ອມດຽວກັນນັ້ນ, ກໍສືບຕໍ່ປັບປຸງລະບົບຂໍ້ມູນສະຖິຕິ ເພື່ອຕອບສະໜອງຄວາມຕ້ອງການ ຢ່າງທັນເວລາ.

7.9 ສືບຕໍ່ປັບປຸງແກ້ໄຂບັນດາກົນໄກ, ນະໂຍບາຍສົ່ງເສີມ ແລະ ປົກປ້ອງການລົງທຶນ, ປັບປຸງຂັ້ນຕອນກ່ອນ ແລະ ຫລັງອະນຸຍາດການລົງທຶນ ໂດຍທັນເປັນອັນລະອຽດ ດຳລັດວ່າດ້ວຍການຈັດຕັ້ງ ແລະ ຜັນຂະຫຍາຍກົດໝາຍວ່າດ້ວຍການຄຸ້ມຄອງ ແລະ ສົ່ງເສີມການລົງທຶນຕ່າງປະເທດ; ຍູ້ແຮງການລະດົມການລົງທຶນຈາກພາກທຸລະກິດຂອງລັດ ແລະ ເອກະຊົນພາຍໃນປະເທດ ແລະ ຕ່າງປະເທດຢ່າງແຂງແຮງ; ສ້າງ ແລະ ບູລະນະຕື່ມ ບັນດາກົນໄກສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ສືບຕໍ່ປະຕິບັດການບໍລິການຜ່ານປະຕູດຽວ ແລະ ມອບສິດອຳນາດໃຫ້ທ້ອງຖິ່ນ ມີສິດອະນຸມັດການລົງທຶນໃນຂະແໜງການບູລິມະສິດ ແລະ ການອະນຸມັດການນຳເຂົ້າພາຫະນະ ແລະ ວັດຖຸດິບຕາມລະບຽບການທີ່ໄດ້ກຳນົດອອກແລ້ວ; ຊຸກຍູ້ຢ່າງແຂງແຮງການລົງທຶນເຂົ້າໃສ່ຂະແໜງທີ່ມີທ່າແຮງ; ປັບປຸງລະບຽບການນຳເຂົ້າແຮງງານທີ່ມີລະດັບເຕັກນິກສູງ ໃຫ້ແກ່ການລົງທຶນຂອງຕ່າງປະເທດ, ພັດທະນາແຮງງານລາວ ແລະ ສະໜອງໃຫ້ພຽງພໍກັບຄວາມຕ້ອງການ; ຈຳກັດ, ຫລຸດຜ່ອນ ແລະ ກ້າວໄປເຖິງການລົບລ້າງຂັ້ນຂອດ ແລະ ການກວດກາທີ່ບໍ່ຈຳເປັນ.

7.10 ສືບຕໍ່ຈັດການສຳມະນາແລກປ່ຽນບົດຮຽນ, ປະສົບການ ແລະ ຄຳເຫັນ ລະຫວ່າງອົງການມະຫາພາກກັບຜູ້ໃຫ້ທຶນ ແລະ ກັບວິສາຫະກິດພາຍໃນ ແລະ ຕ່າງປະເທດ ທັງຢູ່ສູນກາງ ແລະ ທ້ອງຖິ່ນ; ຕິດຕາມຕີລາຄາສະພາບການດຳເນີນທຸລະກິດ ຂອງທຸກພາກສ່ວນເສດຖະກິດ ເພື່ອປະຕິບັດນະໂຍບາຍຍ້ອງຍໍແກ່ຫົວໜ່ວຍ ທີ່ເຄື່ອນໄຫວດີ ແລະ ມີຜົນງານ.

7.11 ເປັນເຈົ້າການ ສູ້ຊົນສ້າງແຜນພັດທະນາກຸ່ມບ້ານທີ່ເປັນບູລິມະສິດຈຸດສຸມ ໃຫ້ໄດ້ 15-20 ກຸ່ມບ້ານຂອງ 20 ເມືອງເປົ້າໝາຍລຶບລ້າງຄວາມທຸກຍາກທີ່ຍັງເຫລືອ ເພື່ອເປັນບ່ອນອີງໃນການຈັດສັນງົບປະມານການລົງທຶນ ແລະ ສະເໜີຕໍ່ຜູ້ໃຫ້ທຶນ; ສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ກະກຽມສະຫລຸບວຽກງານລຶບລ້າງຄວາມທຸກຍາກໃນຂອບເຂດທົ່ວປະເທດ ເພື່ອຖອດຖອນບົດຮຽນ ໃນທ້າຍປີ 2006.

7.12 ເປັນເຈົ້າການປະສານງານ ໃນການຊຸກຍູ້ປັບປຸງສະພາບແວດລ້ອມການລົງທຶນ ເພື່ອເລັ່ງໃສ່ດຶງດູດພາກເອກະຊົນລົງທຶນໃສ່ການພັດທະນາໃຫ້ຫຼາຍຂຶ້ນ ເປັນຕົ້ນແມ່ນເອົາໃຈໃສ່ຕິດຕາມ ຊຸກຍູ້ໃຫ້ທຸກພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດກົດໝາຍ ກ່ຽວກັບການສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດຢ່າງເຂັ້ມງວດ; ເປັນເຈົ້າການໃນການປະສານງານ ເພື່ອແກ້ໄຂຢ່າງທັນການ ຖ້າພົບເຫັນກໍລະນີປະຕິບັດທີ່ບໍ່ສອດຄ່ອງ ກັບລະບຽບກົດໝາຍ.

## ມາດຕາ 8. ມອບໃຫ້ກະຊວງການເງິນ ປະຕິບັດດັ່ງນີ້ :

8.1 ເປັນເຈົ້າການປະສານສົມທົບກັບບັນດາຂະແໜງການ ແລະ ທ້ອງຖິ່ນຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2006-2007 ໃຫ້ໄດ້ຕາມຄາດໝາຍ ໂດຍສຸມໃສ່ຂຸດຄົ້ນທຸກແຫຼ່ງລາຍຮັບ ແລະ ເກັບລາຍຮັບເຂົ້າງົບປະມານແຫ່ງລັດ ເພື່ອຮັບປະກັນໃຫ້ແກ່ລາຍຈ່າຍງົບປະມານ ໄປຕາມແຜນລາຍຈ່າຍທີ່ສະພາແຫ່ງຊາດໄດ້ຮັບຮອງ; ເອົາໃຈໃສ່ຄຸ້ມຄອງທຸກຮ່ອງລາຍຮັບ ໃຫ້ລວມສູນເຂົ້າງົບປະມານແຫ່ງລັດຕາມມາດຕາ 6 ແລະ 7 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ໃນນີ້ໃຫ້ສຸມໃສ່:(1) ກຳນົດປະເພດລາຍຮັບລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ລະອຽດຂຶ້ນຕື່ມ. (2) ສົມທົບກັບຫລາຍພາກສ່ວນ, ຫລາຍຂະແໜງການ ແລະ ຫລາຍຂັ້ນຄົນ, ຫຼາຍແຫຼ່ງຂ່າວ ເພື່ອຊອກຮູ້ການລະເມີດລະບຽບກົດໝາຍ ແລະ

ການເຊື່ອງອຳລາຍຮັບຂອງບັນດາຫົວໜ່ວຍທຸລະກິດ ແລະ ຊອກຮູ້ການລະເມີດລະບຽບກົດໝາຍຂອງພະນັກງານ ແນໃສ່ອັດຊ່ອງຫວ່າງການຮົ່ວໄຫຼຂອງລາຍຮັບ. (3) ປັບປຸງຂອດບໍລິການເກັບ ຂອງຂະແໜງລາຍຮັບ ນັບແຕ່ຢູ່ຂັ້ນສູນກາງລົງຮອດຂັ້ນທ້ອງຖິ່ນ ໃຫ້ກະທັດລັດເບົາບາງ, ວ່ອງໄວ, ຈະແຈ້ງ ພ້ອມທັງຮັບປະກັນຄວາມຖືກຕ້ອງ, ຊັດເຈນ ແລະ ໂປ່ງໃສ ແນໃສ່ເຮັດໃຫ້ຜູ້ໄດ້ຮັບການບໍລິການມີຄວາມເພິ່ງພໍໃຈໃນລະດັບສູງ. (4) ເອົາໃຈໃສ່ປະສານສົມທົບ ກັບອຳນາດການປົກຄອງທ້ອງຖິ່ນ ປັບປຸງຂອດບໍລິການເກັບພາສີທີ່ດິນ ໃຫ້ມີກົນໄກຈະແຈ້ງ ແລະ ສ້າງຂໍ້ມູນສະຖິຕິ ເພື່ອເປັນພື້ນຖານໃຫ້ແກ່ການເກັບລາຍຮັບພາສີທີ່ດິນ; ຊຸກຍູ້ການຈັດຕັ້ງປະຕິບັດ ລັດຖະບັນຍັດຂອງປະທານປະເທດ ເລກທີ 02/ສປປ ແລະ ດຳລັດວ່າດ້ວຍໃບເກັບເງິນ ເລກທີ 12/ນຍ ໃຫ້ຖືກຕ້ອງ. (5) ເອົາໃຈໃສ່ເກັບກຳຂໍ້ມູນ, ສ້າງຖານຂໍ້ມູນແຫຼ່ງລາຍຮັບງົບປະມານແຫ່ງລັດ; ສ້າງ ແລະ ປັບປຸງກົນໄກຄຸ້ມຄອງວຽກງານພາສີ ແລະ ສ່ວຍສາອາກອນ ໃຫ້ທັນໄປສູ່ລະບົບທີ່ທັນສະໄໝເທື່ອລະກ້າວ.

8.2 ເອົາໃຈໃສ່ຄຸ້ມຄອງ ແລະ ນຳພາການຈັດຕັ້ງປະຕິບັດທຸກຮ່ວງລາຍຈ່າຍ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວນັ້ນ ໂດຍສຸມໃສ່ບາງວຽກດັ່ງນີ້: (1) ຮັບປະກັນລາຍຈ່າຍເງິນເດືອນ, ໂດຍເພີ່ມເງິນເດືອນຈາກ 1.800 ກີບ ມາເປັນ 2.000 ກີບ/1 ດັດສະນີ ແລະ ເພີ່ມເງິນອຸດໜູນອາຍຸການ ຕາມທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ; ໃຫ້ມີຄວາມຮັບຜິດຊອບຕໍ່ລາຍຈ່າຍເງິນເດືອນ ແລະ ເງິນອຸດໜູນດັ່ງກ່າວໃນຂອບເຂດທົ່ວປະເທດຢ່າງເປັນເອກະພາບ. (2) ສູ້ຊົນຈັດຕັ້ງປະຕິບັດລາຍຈ່າຍລົງທຶນຂອງລັດໃຫ້ໄປຕາມແຜນພັດທະນາເສດຖະກິດ-ສັງຄົມ ທີ່ສະພາແຫ່ງຊາດໄດ້ຮັບຮອງ ເພື່ອຮັບປະກັນການກະຕຸ້ນເສດຖະກິດ ແລະ ການຜະລິດສິນຄ້າ ໃຫ້ມີຖ່ວງທ່າດີຂຶ້ນ. (3) ເອົາໃຈໃສ່ຈັດສັນ ແລະ ຊຳລະໜີ້ພາຍໃນແລະ ຕ່າງປະເທດ ຕາມແຜນການວາງໄວ້.

8.3 ເອົາໃຈໃສ່ຈັດຕັ້ງປະຕິບັດກົດໝາຍ ກ່ຽວກັບງົບປະມານ-ການເງິນ ແລະ ພ້ອມກັນນັ້ນ ກໍ່ສືບຕໍ່ຄົ້ນຄວ້າປັບປຸງ ແລະ ສ້າງຂຶ້ນໃໝ່ ບາງກົດໝາຍທີ່ເຫັນວ່າມີຄວາມຈຳເປັນ ເພື່ອສະເໜີຕໍ່ລັດຖະບານ ແລະ ສະພາແຫ່ງຊາດ.

8.4 ເປັນເຈົ້າການປະສານສົມທົບກັບຄະນະກຳມະການແຜນການ ແລະ ການລົງທຶນ ຄົ້ນຄວ້າ ສ້າງບົດແນະນຳ ກ່ຽວກັບການສ້າງແຜນງົບປະມານແຫ່ງລັດ ສົກປີ 2007-2008, ກຳນົດທິດທາງ ແລະ ຂອບເຂດທຶນງົບປະມານແຫ່ງລັດ ໃຫ້ໄປຕາມແຜນຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ ແລະ ກະກຽມສ້າງແຜນງົບປະມານແຫ່ງລັດ ເລີ່ມແຕ່ຕົ້ນງວດ 2 ຂອງສົກປີ 2006-2007 ເປັນຕົ້ນໄປ.

8.5 ໃນໄລຍະຕົ້ນປີ ທີ່ລາຍຮັບງົບປະມານບໍ່ທັນຮັບປະກັນໃຫ້ແກ່ການປະຕິບັດລາຍຈ່າຍໄດ້ນັ້ນ, ໃຫ້ກະຊວງການເງິນ ສົມທົບກັບທະນາຄານແຫ່ງ ສປປ ລາວ ຄົ້ນຄວ້າກົນໄກການນຳໃຊ້ເງິນລ່ວງໜ້າຈາກທະນາຄານ ເພື່ອຮັບປະກັນລາຍຈ່າຍງົບປະມານໃນລະດັບທີ່ເໝາະສົມ, ແຕ່ຕ້ອງມີກົນໄກຊຳລະສະສາງຄືນໃຫ້ທະນາຄານຢ່າງເປັນລະບົບ ເພື່ອຮັບປະກັນໃຫ້ສະພາບເສດຖະກິດ-ການເງິນ ມີສະຖຽນລະພາບ.

8.6 ໃຫ້ສົມທົບກັບບັນດາຂະແໜງການກ່ຽວຂ້ອງ ຊອກຫາແຫຼ່ງທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ ເພື່ອນຳໃຊ້ເຂົ້າໃນການປະຕິບັດໂຄງການພັດທະນາທີ່ເປັນບຸລິມະສິດ ຂອງລັດຖະບານ.

8.7 ເອົາໃຈໃສ່ປັບປຸງວຽກງານ ຂອງຂະແໜງການຢ່າງຮອບດ້ານ ແລະ ມີຄວາມໜັກແໜ້ນ, ເປັນຕົ້ນແມ່ນຕັ້ງໜ້າແກ້ໄຂປະກົດການຫຍໍ້ທໍ້ໃນຂະແໜງການເງິນ, ສືບຕໍ່ປັບປຸງການຈັດຕັ້ງ, ຄົ້ນຄວ້າກົນໄກການປະສານສົມທົບພາຍໃນຂະແໜງການ ແລະ ລະຫວ່າງສູນກາງ ກັບທ້ອງຖິ່ນ ໃຫ້ຄ່ອງຕົວ ແລະ ສະດວກຂຶ້ນຕື່ມເພື່ອຮັບປະກັນການເຮັດໜ້າທີ່ ທີ່ໄດ້ຮັບມອບໝາຍ.

8.8 ໃຫ້ຄົ້ນຄວ້າ ອອກບົດແນະນຳຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ ສົກປີ 2006-2007 ໃຫ້ລະອຽດ ແລະ ຈະແຈ້ງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ໂດຍເລີ່ມຈາກການຄຸ້ມຄອງງົບປະມານມະຫາພາກ ແລະ ກ້າວໄປຫາງົບປະມານຈຸລະພາກ, ຮັບປະກັນບໍ່ໃຫ້ລາຍຮັບຮົ່ວໄຫຼ ແລະ ບໍ່ໃຫ້ມີການຈ່າຍເກີນແຜນ ຫຼື ນອກແຜນ.

**ມາດຕາ 9. ມອບໃຫ້ ກະຊວງການຕ່າງປະເທດ ປະຕິບັດດັ່ງນີ້ :**

9.1 ເພີ່ມທະວີ ການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດດຳລັດນາຍົກລັດຖະມົນຕີ ເລກທີ 168 / ນຍ, ລົງວັນທີ 22 ພະຈິກ 2004 ແລະ ບົດແນະນຳການຈັດຕັ້ງປະຕິບັດ ເລກທີ 1467 / ຕປທ.ຣມ, ລົງວັນທີ 22 ມີນາ 2006 ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ໂດຍສະເພາະ ແມ່ນສອດຄ່ອງກັບໂຄງການລົງທຶນຂອງລັດປະຈຳປີ. ພາຍຫລັງຈັດຕັ້ງປະຕິບັດແລ້ວ, ຖ້າຂອດໃດຍັງບໍ່ທັນມີຄວາມຊັດເຈນ ຫລື ສ້າງ ຄວາມຫຍຸ້ງຍາກ ແລະ ຄວາມສັບສົນໃຫ້ພາຍໃນ ແລະ ຜູ້ໃຫ້ທຶນໃນເວລາຈັດຕັ້ງປະຕິບັດຕົວຈິງ ແມ່ນໃຫ້ພາກສ່ວນກ່ຽວຂ້ອງຮີບຮ້ອນຄົ້ນຄວ້າເພື່ອປັບປຸງແກ້ໄຂ ແລ້ວນຳສະເຫນີຕໍ່ລັດຖະບານພິຈາລະນາໂດຍໄວ .

9.2 ສົມທົບກັບຄະນະກຳມະການແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ສືບຕໍ່ຄົ້ນຄວ້າກ່ຽວກັບການຍົກເລີກ ຫລື ຫລຸດຜ່ອນອັດຕາສ່ວນສົມທົບຂອງທຶນພາຍໃນລົງ ( ທຶນສົມທົບຈາກງົບປະມານລັດ ) ສຳລັບໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອລ້າ ແລະ ກູ້ຢືມ ກັບຜູ້ໃຫ້ທຶນໂດຍສະເພາະໂຄງການພັດທະນາດ້ານສັງຄົມ, ການພັດ ທະນາຊັບພະຍາກອນມະນຸດ ແລະ ວຽກງານລຶບລ້າງຄວາມທຸກຍາກ.

**ມາດຕາ 10. ມອບໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດດັ່ງນີ້ :**

10.1 ເປັນເຈົ້າການຄົ້ນຄວ້າ ເພື່ອວາງ ນະໂຍບາຍ ເງິນຕາໃຫ້ສົມຄູ່ກັບການຂະຫຍາຍຕົວຂອງເສດຖະກິດ, ຄຸ້ມຄອງອັດຕາແລກປ່ຽນໃຫ້ມີຄວາມສະຫງົບໝັ້ນທ່ຽງ, ກຳນົດນະໂຍບາຍອັດຕາດອກເບັ້ຽໃຫ້ແທດເໝາະ ແລະ ຊຸກຍູ້ສົ່ງເສີມການຜະລິດ-ທຸລະກິດຢ່າງແຂງແຮງ; ວາງລະບຽບເພື່ອຊຸກຍູ້ສົ່ງເສີມການນຳໃຊ້ເງິນກີບ ໃນການຊຳລະສະສາງພາຍໃນໃຫ້ຫລາຍຂຶ້ນ; ອອກລະບຽບການ ກ່ຽວກັບການ ຊຳລະເງິນຕາຕ່າງປະເທດຜ່ານລະບົບທະນາຄານ ແລະ ຄຸ້ມຄອງກະແສການໄຫລເຂົ້າ- ອອກ ຂອງເງິນຕາຕ່າງປະເທດ ຕາມລະບຽບການວາງໄວ້.

10.2 ເອົາໃຈໃສ່ສ້າງເງື່ອນໄຂໃຫ້ຄັງສຳຮອງເງິນຕາຕ່າງປະເທດທາງການເພີ່ມຂຶ້ນ, ຄຸ້ມຄອງ ແລະ ປັບປຸງໃຫ້ທະນາຄານທຸລະກິດລັດ ມີຄວາມສາມາດໃນການບໍລິການ ຢ່າງມີປະສິດທິພາບ ແລະ ໄດ້ມາດຕະຖານສາກົນເທື່ອລະກ້າວ ເພື່ອສ້າງຄວາມເຊື່ອຖືແກ່ລູກຄ້າ; ເພີ້ມທະວີເອົາໃຈໃສ່ການແກ້ໄຂບັນຫາໜີ້ສິນຄ້າງຄາ ແລະ ໜີ້ບໍ່ເກີດດອກອອກຜົນ.

10.3 ສືບຕໍ່ຄົ້ນຄວ້າໂຄງການສ້າງຄວາມເຂັ້ມແຂງ ແລະ ພັດທະນາລະບົບສະຖາບັນການເງິນຢູ່ ສປປ ລາວ ເພື່ອກະຕຸ້ນການພັດທະນາເສດຖະກິດ, ສ້າງຄວາມເຊື່ອຖືຕໍ່ລູກຄ້າທັງພາຍໃນ ແລະ ຕ່າງປະເທດ; ຕັ້ງໜ້າຄົ້ນຄວ້າ ແລະ ເຜີຍແຜ່ກ່ຽວກັບຕະຫລາດທຶນ ເພື່ອກະກຽມເງື່ອນໄຂກ້າວໄປສູ່ການພັດທະນາຕະຫລາດເງິນທຶນ ໃນຕໍ່ໜ້າ.

**ມາດຕາ 11. ມອບໃຫ້ກະຊວງການອຸດສາຫະກຳ ແລະ ການຄ້າ ປະຕິບັດດັ່ງນີ້ :**

11.1 ຄົ້ນຄວ້າ ວາງນະໂຍບາຍ ແລະ ມາດຕະການຕ່າງໆ ເພື່ອຄຸ້ມຄອງຕິດຕາມ, ດັດສົມ ແລແຊກແຊງລາຄາ ສິນຄ້າໃນເວລາທີ່ຈຳເປັນ, ກຳນົດລະບຽບການແບ່ງຄວາມຮັບຜິດຊອບ ໃນການຄຸ້ມຄອງການນຳເຂົ້າສິນຄ້າຍຸດທະສາດໃຫ້ບັນດາແຂວງ; ປັບປຸງ ແລະ ສ້າງກົນໄກທີ່ສອດຄ່ອງ ເພື່ອຊຸກຍູ້ສົ່ງເສີມການຜະລິດສິນຄ້າທົດແທນການນຳເຂົ້າ ແລະ ເປັນຂາອອກ. ເປັນເຈົ້າການຊອກຫາຕະຫລາດສົ່ງອອກສິນຄ້າໃຫ້ກວ້າງຂວາງ, ເພີ່ມການຈັດງານວາງສະແດງສິນຄ້າ, ຕະຫຼາດນັດຂອງປະຊາຊົນ, ການສົ່ງເສີມການຄ້າຊາຍແດນ ແລະ ການຄ້າຜ່ານແດນໃຫ້ແຂງແຮງກວ່າເກົ່າ; ເອົາໃຈໃສ່ຄຸ້ມຄອງຮ້ານຄ້າປອດພາສີ ໃຫ້ເຄື່ອນໄຫວຢ່າງຖືກຕ້ອງ ຕາມລະບຽບກົດໝາຍຢ່າງເຂັ້ມງວດ.

11.2 ສືບຕໍ່ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້ານະໂຍບາຍ, ກົດໝາຍ, ລະບຽບການຕ່າງໆ ເພື່ອພັດທະນາ ແລະ ຄຸ້ມຄອງເຂດເສດຖະກິດພິເສດ, ເຂດອຸດສາຫະກຳ, ເຂດການຄ້າເສລີ ແລະ ການບໍລິການຜ່ານທີ່ລັດຖະບານໄດ້ຕົກລົງແລ້ວ ໃຫ້ສຳເລັດໂດຍໄວ ແນໃສ່ສົ່ງເສີມການຜະລິດ ແລະ ການບໍລິການໃຫ້ເພີ່ມຂຶ້ນ.

11.3 ສ້າງເງື່ອນໄຂ ເພື່ອຊຸກຍູ້ການປະຕິບັດຍຸດທະສາດຫັນເປັນອຸດສາຫະກຳ ແລະ ເປັນທັນສະໄໝໃຫ້ເປັນຮູບປະທຳເທື່ອລະກ້າວ, ສືບຕໍ່ຄົ້ນຄວ້າ ສ້າງໂຄງການບູລິມະສິດຜະລິດສິນຄ້າ ຫລື ການບໍລິການທີ່ເປັນປາຍແຫລມ, ໂຄງການປັບປຸງ ຍົກລະດັບເຕັກນິກເຕັກໂນໂລຊີ ເພື່ອສະເໜີລັດຖະບານພິຈາລະນາເອົາເຂົ້າແຜນລົງທຶນ ໃນປີຕໍ່ໄປ.

11.4 ເອົາໃຈໃສ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດ ເລກທີ 42/ນຍ ກ່ຽວກັບການຊຸກຍູ້ ແລະ ພັດທະນາວິສາຫະກິດຂະໜາດກາງ ແລະ ນ້ອຍ ເພື່ອຊຸກຍູ້ການຜະລິດໃຫ້ກວ້າງຂວາງ, ສາມາດຕອບສະໜອງໃຫ້ແກ່ຕະຫຼາດພາຍໃນ ແລະ ເພື່ອສົ່ງອອກ, ສ້າງວຽກເຮັດງານທຳໃຫ້ແກ່ແຮງງານ ໂດຍສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດເຂົ້າຮ່ວມຢ່າງຕັ້ງໜ້າ.

**ມາດຕາ** 12. ມອບໃຫ້ກະຊວງກະສິກຳ-ປ່າໄມ້ ແລະ ກະຊວງອຸດສາຫະກຳ-ການຄ້າ ປະສານງານກັນ ເພື່ອປະຕິບັດກົນໄກຄວບຄຸມ ແລະ ເຂັ້ມງວດຕໍ່ການປະຕິບັດຄຳສັ່ງນາຍົກລັດຖະມົນຕີ ກ່ຽວກັບການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້; ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກວດກາຕີລາຄາ ແລະ ປະເມີນ ບໍລິມາດໄມ້ໃນຂອບເຂດທີ່ອະນຸຍາດໃຫ້ຂຸດຄົ້ນ ແລະ ເກັບກູ້ໄມ້ ຕາມໂຄງການກໍ່ສ້າງເຂື່ອນໄຟຟ້າ ແລະ ແລວເສັ້ນທາງທີ່ໄດ້ຮັບການອະນຸມັດ, ຄົ້ນຄວ້າໂກຕ້າໄມ້ຮັບໃຊ້ພາຍໃນ ຂອງທ້ອງຖິ່ນຕ່າງໆ ສະເໜີຕໍ່ລັດຖະບານ ເພື່ອອອກອະນຸມັດໂກຕາໄມ້ລວມ ຂອງສົກປີ 2006-2007 ແນໃສ່ຮັບປະກັນການຄຸ້ມຄອງກວດກາ ແລະ ເກັບລາຍຮັບເຂົ້າງົບປະມານໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

**ມາດຕາ** 13. ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເປັນເຈົ້າການຄົ້ນຄວ້າ ຮ່າງນະໂຍບາຍກ່ຽວກັບການສຳປະທານ ແລະ ການຂຸດຄົ້ນບໍ່ແຮ່ ແລ້ວກຳນົດເຂດແດນໃຫ້ຈະແຈ້ງ; ສືບຕໍ່ ຕິດຕາມການປະຕິບັດໂຄງການນ້ຳເທີນ 2, ໂຄງການເຊຊະໜາມ 3 ແລະ ໂຄງການເຂື່ອນໄຟຟ້າອື່ນໆ ໃຫ້ປະຕິບັດຕາມແຜນການ; ເອົາໃຈໃສ່ຊຸກຍູ້ໂຄງການທີ່ຍັງບໍ່ທັນໄດ້ຕົກລົງກັນ ໃຫ້ສຳເລັດໄວ ເພື່ອໃຫ້ສາມາດດຳເນີນການໄດ້; ເອົາໃຈໃສ່ຕິດຕາມ ຊຸກຍູ້ການປະຕິບັດ ລະບຽບການຄຸ້ມຄອງການຂຸດຄົ້ນແຮ່ຄຳ, ທອງແດງ ແລະ ແຮ່ອື່ນໆຢ່າງເຄັ່ງຄັດ ບົນພື້ນຖານກົດໝາຍບໍ່ແຮ່ ແລະສັນຍາທີ່ໄດ້ເຊັນກັນ.

ມາດຕາ 14. ມອບໃຫ້ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ສືບຕໍ່ຄົ້ນຄວ້າ ຮ່າງດຳລັດ ກ່ຽວກັບກຳນົດໝາຍ, ມາດຖານລາຄາຫົວໜ່ວຍການກໍ່ສ້າງ, ສ້ອມແປງຕ່າງໆ ນັບທັງກຳນົດລາຄາທາງ ສຳລັບຄິດໄລ່ຄ່າສິ້ນເປືອງ ເພື່ອເປັນພື້ນຖານບັງຄັບໃຊ້ໃນການວາງແຜນ, ຄຸ້ມຄອງ, ກວດກາ ແລະ ປະເມີນຜົນໂຄງການ ແລະ ກິຈະການລົງທຶນຕ່າງໆຢ່າງເປັນລະບົບ. ພ້ອມດຽວກັນນັ້ນ, ກໍ່ສົມທົບກັບກະຊວງ, ອົງການຕ່າງໆ ອອກລະບຽບການທີ່ໃຫ້ບູລິມະສິດ ແກ່ບໍລິສັດພາຍໃນຂອງລາວ ( ທີ່ນຳໃຊ້ວັດສະດຸກໍ່ສ້າງພາຍໃນເປັນຕົ້ນຕໍ ແລະ ນຳໃຊ້ແຮງງານລາວ) ຮັບເໝົາໂຄງການກໍ່ສ້າງທີ່ໃຊ້ງົບປະມານຂອງລັດ ເພື່ອເສີມຂະຫຍາຍກຳລັງແຮງ ຂອງເສດຖະກິດພາຍໃນ ແລະ ຮັກສາຄ່າເງິນກີບໃຫ້ມີຄວາມໝັ້ນຄົງ; ໃຫ້ນຳສະເໜີຮ່າງດຳລັດດັ່ງກ່າວ ຕໍ່ລັດຖະບານ ໃນງວດທີ 2 ຂອງສົກງົບປະມານ 2006-2007; ເອົາໃຈໃສ່ປົກປັກຮັກສາທາງຫລວງແຫ່ງຊາດ ເພື່ອປະຫຍັດລາຍຈ່າຍໃນການສ້ອມແປງ ແລະ ເຮັດໃຫ້ອາຍຸການໃຊ້ງານໄດ້ຍາວນານ ດ້ວຍການເອົາໃຈໃສ່ໃນການຊັ່ງນ້ຳໜັກລົດບັນທຸກຢ່າງເຂັ້ມງວດ ແລະ ການຫ້າມບໍ່ໃຫ້ລົດບັນທຸກນ້ຳໜັກເກີນມາດຖານທີ່ທາງການໄດ້ກຳນົດ ແລ່ນໃນລະດູຝົນ.

ມາດຕາ 15. ມອບໃຫ້ກະຊວງສຶກສາທິການປະສານສົມທົບ ກັບກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຄົ້ນຄວ້າສ້າງແຜນແມ່ບົດ ແລະ ໂຄງການພັດທະນາຊັບພະຍາກອນມະນຸດ; ໃຫ້ກະຊວງສຶກສາທິການ ເປັນເຈົ້າການຄົ້ນຄ້ວາ ແລະ ຈັດຕັ້ງປະຕິບັດການປະຕິຮູບລະບົບການສຶກສາແຫ່ງຊາດ; ເອົາໃຈໃສ່ກໍ່ສ້າງໂຄງການມະຫາວິທະຍາໄລແຫ່ງສຸພານຸວົງ, ມະຫາວິທະຍາໄລຈຳປາສັກ ແລະ ໂຮງຮຽນພອນສະຫວັນຊົນເຜົ່າກຽມເຂົ້າມະຫາວິທະຍາໄລ ໃຫ້ສຳເລັດໂດຍໄວ; ປັບປຸງນະໂຍບາຍການສຶກສາພາກເອກກະຊົນ ເພື່ອຂະຫຍາຍໂຮງຮຽນຊັ້ນຕ່າງໆ ໃນແຕ່ລະທ້ອງຖິ່ນ, ເປັນຕົ້ນ: ໂຮງຮຽນ ສາມັນ, ໂຮງຮຽນວິຊາຊີບ, ວິທະຍາໄລ ແລະ ອື່ນໆ; ຄົ້ນຄວ້ານະໂຍບາຍເງິນເດືອນຕໍ່ຄູອາຈານ ໂດຍສະ ເພາະຜູ້ທີ່ໄປເຮັດວຽກຢູ່ບ່ອນທຸລະກັນດານຫ່າງໄກສອກຫລີກ, ນະໂຍບາຍຍົກເວັ້ນພາສີ-ອາກອນ ຕໍ່ຜູ້ລົງທຶນໃສ່ວຽກງານໃນຂົງເຂດສຶກສາ ແນໃສ່ລະດົມກຳລັງແຮງທົ່ວສັງຄົມເຂົ້າ ໃນການຂະຫຍາຍວຽກງານສຶກສາຢ່າງຕໍ່ເນື່ອງ.

ມາດຕາ 16. ມອບໃຫ້ກະຊວງສາທາລະນະສຸກ ຄົ້ນຄວ້ານະໂຍບາຍສາທາລະນະສຸກ, ສ້າງເປັນໂຄງການ ແລະ ຫັນເອົາວຽກງານ ສາທາລະນະສຸກ ລົງສູ່ຮາກຖານ, ຊຶ່ງເລີ່ມຈາກການຫັນເອົາພະນັກງານ ລົງໄປປະຈຳຢູ່ໂຮງໝໍພາກ, ໂຮງຮຽນ , ສະຖາບັນ, ສູນ, ໂຄງການ, ແຂວງ, ເມືອງ, ສຸກສາລາ ແລະ ກຸ່ມບ້ານຕ່າງໆ ເພື່ອໃຫ້ການບໍລິການສຸຂະພາບແກ່ປະຊາຊົນ ແລະ ແກ້ໄຂບັນດາພະຍາດ ແລະ ໂລກລະບາດທີ່ເກີດຂຶ້ນຢູ່ປະເທດເຮົາ; ສືບຕໍ່ປະຕິບັດການປິ່ນປົວປະເພດເສັຽຄ່າ ແລະ ບໍ່ເສັຽຄ່າໃຫ້ສອດຄ່ອງກັບສະພາບຕົວຈິງ; ອອກແຮງໂຄສະນາເພື່ອດູດດຶງເອົາທຶນສະໜັບສະໜູນ ຈາກອົງການຈັດຕັ້ງສາກົນ, ພາກສ່ວນເອກະຊົນ ແລະ ອົງການຈັດຕັ້ງມະຫາຊົນ ເພື່ອຈັດຕັ້ງປະຕິບັດໂຄງການຕ່າງໆໃນດ້ານສາທາລະນະສຸກ.

ມາດຕາ 17. ມອບໃຫ້ກະຊວງຖະແຫລງຂ່າວ ແລະ ວັດທະນະທຳຄົ້ນຄວ້າ ສ້າງໂຄງການ ເພື່ອປັບປຸງລະບົບສື່ມວນຊົນໃຫ້ມີຄຸນນະພາບ, ຊັດເຈນ, ວ່ອງໄວທັນການ, ເປັນສື່ໃນການໃຫ້ຄວາມຮູ້ຄວາມເຂົ້າໃຈ ທັງມີລັກສະນະສຶກສາອົບຮົມ ໄປຕາມແນວທາງນະໂຍບາຍຂອງພັກ, ໃຫ້ຄວາມຮູ້ດ້ານລະບຽບກົດໝາຍ, ວິທະຍາສາດ ແລະ ວິຊາການຕ່າງໆ, ເອົາໃຈໃສ່ໂຄສະນາຕົວແບບ, ວຽກດີຄົນເດັ່ນ; ສົ່ງເສີມສິນລະປະວັດທະນະທຳທີ່ມີ

ມູນເຊື້ອອັນດີງາມ ເພື່ອຊຸກຍູ້ສົ່ງເສີມການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ; ເອົາໃຈໃສ່ໂຄສະນາ ເພື່ອດຶງດູດເອົານັກທ່ອງທ່ຽວໃຫ້ຫຼາຍຂຶ້ນ; ຈັດສຳມະນາເຜີຍແຜ່ຄວາມຮູ້ທີ່ສົ່ງເສີມມູນເຊື້ອ ແລະ ວັດທະນະທຳຂອງຊາດ.

**ມາດຕາ 18.** ມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າຮ່າງກົດໝາຍ ວ່າດ້ວຍການປະກັນສັງຄົມ ທີ່ກວມເອົາທຸກພາກສ່ວນເສດຖະກິດ; ຄົ້ນຄວ້ານະໂຍບາຍເງິນເດືອນ ສຳລັບຂົງເຂດວິສາຫະກິດ ນັບທັງວິສາຫະກິດການລົງທຶນຂອງຕ່າງປະເທດ; ຄົ້ນຄວ້າສ້າງແຜນການ ແລະ ໂຄງການພັດທະນາສີມືແຮງງານໃຫ້ມີຄຸນນະພາບ, ຮັບປະກັນຖັນແຖວພະນັກງານ, ກຳມະກອນເຕັກນິກ ທີ່ພົວພັນກັບການລົງທຶນຕ່າງປະເທດໃຫ້ພຽງພໍທາງດ້ານຈຳນວນ ແລະ ຄຸນນະພາບ; ຄົ້ນຄວ້າ ແລະ ປະກາດໃຊ້ລະບຽບການໃນການຄຸ້ມຄອງແຮງງານຕ່າງດ້າວທີ່ເຮັດວຽກໃນ ສປປ ລາວ ໃຫ້ຮັດກຸມ ແລະ ເຂັ້ມງວດ; ແກ້ໄຂບັນຫາຄົນລາວທີ່ອອກໄປເຮັດວຽກຢູ່ຕ່າງປະເທດໃຫ້ຖືກຕ້ອງ; ເອົາໃຈໃສ່ເພື່ອຄົ້ນຄວ້າ ປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຜົນງານຕໍ່ການປະຕິວັດ, ຜູ້ອອກກິນເບັ້ຍບຳນານໃຫ້ດີ ແລະ ຖືກຕ້ອງທ່ຽງທຳ .

**ມາດຕາ 19.** ມອບໃຫ້ກະຊວງຍຸຕິທຳສົມທົບ ກັບສານປະຊາຊົນ ແລະ ອົງການໄອຍະການ ເພື່ອກຳນົດມາດຕະການອັນຈຳເປັນຕ່າງໆ ແນໃສ່ຮັບປະກັນຄວາມຍຸຕິທຳໃນສັງຄົມ, ການປະຕິບັດກົດໝາຍ ແລະ ລະບຽບການຕ່າງໆ ຢ່າງເຂັ້ມງວດ, ເປັນຕົ້ນແມ່ນເຂັ້ມງວດຕໍ່ການແກ້ໄຂຄະດີຕ່າງໆ ແລະ ເຂັ້ມງວດຕໍ່ການປະຕິບັດຄຳຕັດສິນຂອງສານ; ຄົ້ນຄວ້າໂຄງການສ້າງນິຕິກຳໃໝ່ທີ່ຈຳເປັນ ໃຫ້ເປັນລະບົບຄົບຖ້ວນເທື່ອລະກ້າວ; ຈັດຕັ້ງການສຳມະນາ ແລະ ການໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການຕ່າງໆຢ່າງກວ້າງຂວາງ ເພື່ອເຮັດໃຫ້ທົ່ວສັງຄົມມີຄວາມຮັບຮູ້ເຊື່ອມຊຶມຢ່າງຖືກຕ້ອງ ແລະ ໜັກແໜ້ນ.

**ມາດຕາ 20.** ໃຫ້ຂະແໜງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ອຳນາດການປົກຄອງທຸກຂັ້ນເອົາໃຈໃສ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແນໃສ່ເຮັດໃຫ້ທົ່ວປະເທດມີຄວາມສະຫງົບຢ່າງໜັກແໜ້ນ; ຕັ້ງໜ້າປະກອບສ່ວນ ໃນການສ້າງສາພັດທະນາປະເທດຊາດ, ປຸກລະດົມ, ຂົນຂວາຍ ແລະ ຈັດຕັ້ງມະຫາຊົນເຂົ້າຮ່ວມວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບຢູ່ຮາກຖານໃຫ້ກວ້າງຂວາງ; ມອບໃຫ້ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ສົມທົບກັບກະຊວງການຕ່າງປະເທດ ຄົ້ນຄວ້າລະບຽບ ການ ແລະ ມາດຕະການທີ່ເໝາະສົມ ເພື່ອອຳນວຍຄວາມສະດວກ, ຄຸ້ມຄອງ ແລະ ຮັບປະກັນຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ, ນັກທຸລະກິດ, ນັກລົງທຶນ, ນັບທັງຜູ້ຊ່ຽວຊານຕ່າງປະເທດ ແນໃສ່ສ້າງສະພາບແວດລ້ອມທີ່ດີ ໃຫ້ແກ່ການຈັດກອງປະຊຸມລະດັບສາກົນ, ການທ່ອງທ່ຽວ ແລະ ການເຄື່ອນໄຫວດຳເນີນທຸລະກິດ ແລະ ການລົງທຶນຢູ່ ສ ປປ ລາວ ຕາມນະໂຍບາຍຂອງລັດຖະບານ.

**ມາດຕາ 21.** ມອບໃຫ້ອົງການກວດກາແຫ່ງລັດ, ອົງການກວດສອບບັນຊີ ຄົ້ນຄວ້າກົນໄກ ແລະ ລະບຽບການຕິດຕາມກວດກາການປະຕິບັດລາຍຈ່າຍງົບປະມານ ຂອງບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນຢ່າງເຄັ່ງຄັດກວ່າເກົ່າ ເພື່ອຮັບປະກັນໃຫ້ການປະຕິບັດລາຍຈ່າຍໄປຕາມເປົ້າໝາຍ ຂອງແຜນການທີ່ໄດ້ອະນຸມັດ;. ກວດກາຄວາມຖືກຕ້ອງສອດຄ່ອງໃນການຈັດຕັ້ງ ແລະ ການນຳໃຊ້ທຶນ ຂອງບັນດາກອງທຶນຕ່າງໆ ທີ່ຂະແໜງການສູນກາງ ແລະ ທ້ອງຖິ່ນສ້າງຕັ້ງຂຶ້ນ ເພື່ອເຮັດໃຫ້ລາຍຮັບ ແລະ ລາຍຈ່າຍລວມສູນຜ່ານບັນຊີງົບ

ປະມານແຫ່ງລັດ ຕາມກົດໝາຍກຳນົດໄວ້ ແລະ ເພື່ອເສີມຂະຫຍາຍຄຸນປະໂຫຍດຂອງແຫຼ່ງທຶນຕ່າງໆ ໄດ້ເປັນຢ່າງດີ; ລົງກວດກາຢ່າງໃກ້ຊິດ ການຈັດຕັ້ງປະຕິບັດຮ່ວງລາຍຮັບ ແລະ ລາຍຈ່າຍຕ່າງໆຂອງງົບປະມານແຫ່ງລັດ ຂອງແຕ່ລະຂະແໜງການ ແລະ ແຕ່ລະແຂວງ ລົງຫາຂັ້ນເມືອງ ແລະ ບ້ານ, ໂດຍສະເພາະບ່ອນທີ່ມີງົບປະມານສົມທົບ.

**ມາດຕາ 22.** ມອບໃຫ້ຄະນະປັບປຸງທຸລະກິດ ສົມທົບກັບກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ສືບຕໍ່ຄົ້ນຄວ້າ ປັບປຸງວິທີການແກ້ໄຂໜີ້ສິນຂອງລັດວິສາຫະກິດ ໃຫ້ສຳເລັດເປັນກ້າວໆ ເພື່ອໃຫ້ວິສາຫະກິດເລົ່ານັ້ນ ສາມາດເຄື່ອນໄຫວຢ່າງມີປະສິດທິຜົນດີຂຶ້ນ; ເອົາໃຈໃສ່ປັບປຸງລະບົບບັນຊີຂອງລັດວິສາຫະກິດ ໃຫ້ຖືກຕ້ອງ ແລະ ຮັບປະກັນຄວາມໂປ່ງໃສ; ສືບຕໍ່ປະຕິບັດແຜນປັບປຸງວິສາຫະກິດຢ່າງຕັ້ງໜ້າ ແລະ ມີຜົນສັກສິດໃນການຈັດຕັ້ງປະຕິບັດແຜນດຳເນີນງານຂອງຕົນ; ເພີ່ມທະວີການປະສານງານ ລະຫວ່າງພາກສ່ວນຕ່າງໆທີ່ກ່ຽວຂ້ອງໃນການຄຸ້ມຄອງງົບປະມານ; ຈັດຕັ້ງການກວດສອບ, ກວດກາບັນດາວິສາຫະກິດ ແລະ ອົງການທີ່ນຳໃຊ້ງົບປະມານຂອງລັດ; ສືບຕໍ່ກວດກາຄືນ ຖານະການເງິນ, ການຖືຫຸ້ນ ແລະ ເງິນປັນຜົນຂອງລັດວິສາຫະກິດ, ວິສາຫະກິດຮ່ວມທຶນ ແລະ ວິສາຫະກິດປະສົມ ທີ່ລັດມີຕົວແທນ ຫລື ເປັນຜູ້ຖືຫຸ້ນ ໂດຍແຍກໃຫ້ເຫັນລະອຽດ ອັນໃດແມ່ນເງິນປັນຜົນ, ອັນໃດແມ່ນອາກອນ ແລະ ພາສີປະເພດຕ່າງໆ ຂອງບໍລິສັດຮ່ວມຫຸ້ນ ທີ່ຈະຕ້ອງສົ່ງຄືນໃຫ້ລັດຖະບານ ແລະ ອັນໃດແມ່ນລາຍຮັບຂອງລັດວິຫາຫະກິດເອງ. ຫລັງຈາກນັ້ນ, ໃຫ້ລາຍງານລັດຖະບານ ເພື່ອຊອກຊ່ອງທາງປັບປຸງວິສາຫະກິດດັ່ງກ່າວ ແນໃສ່ຫລຸດຜ່ອນການໃຊ້ຈ່າຍຊ້ຳຊ້ອນ, ການຟຸມເຟືອຍ ແລະ ເພື່ອຮັບປະກັນການເກັບລາຍຮັບເຂົ້າງົບປະມານໄດ້ຢ່າງເຕັມສ່ວນ.

**ມາດຕາ 23.** ມອບໃຫ້ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສົມທົບກັບມະຫາວິທະຍາໄລແຫ່ງຊາດ ແລະ ສະຖາບັນຄົ້ນຄ້ວາວິທະຍາສາດ ດຳເນີນໂຄງການຄົ້ນຄວ້າວິທະຍາສາດການນຳໃຊ້ ສຳລັບຂະແໜງທີ່ເຫັນວ່າເໝາະສົມ ສຳລັບ ສປປ ລາວ, ໃນນີ້ ນັບທັງໂຄງການຮ່ວມມືຄົ້ນຄວ້າກັບສາກົນ, ໂຄງການກໍ່ສ້າງນັກຄົ້ນຄວ້າໃນດ້ານຕ່າງໆ ທັງຢູ່ພາຍໃນ ແລະ ຕ່າງປະເທດ; ສ້າງແຜນລະດົມແຫຼ່ງທຶນເຂົ້າໃນການຄົ້ນຄວ້າວິທະຍາສາດເຕັກນິກ ຈາກພາຍໃນ ສົມທົບກັບການຍາດແຍ່ງການຊ່ວຍເຫຼືອຈາກຕ່າງປະເທດ; ສ້າງແຜນນຳໃຊ້ຜົນສຳເລັດດ້ານວິທະຍາສາດຂອງໂລກເຂົ້າໃນການພັດທະນາ; ຄົ້ນຄວ້າ ແລະ ເກັບກຳພູມປັນຍາຂອງປະຊາຊົນ ໃນການຜະລິດ, ການບໍລິການ ແລະ ການດຳລົງຊີວິດທີ່ດີ ເພື່ອສົ່ງເສີມ ແລະ ເຜີຍແຜ່ຢ່າງກວ້າງຂວາງ.

**ມາດຕາ 24.** ມອບໃຫ້ອົງການທ່ອງທ່ຽວແຫ່ງຊາດສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ສ້າງໂຄງການປັບປຸງການບໍລິການທ່ອງທ່ຽວໃຫ້ໄດ້ມາດຕະຖານເພື່ອດຶງດູດນັກທ່ອງທ່ຽວເພີ່ມຂຶ້ນ, ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ ແລະ ເຮັດຂາອອກກັບທີ່ຢູ່ໃນແຕ່ລະທ້ອງຖິ່ນ; ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ກະກຽມເງື່ອນໄຂຕ່າງໆເພື່ອເປີດດ່ານສາກົນທີ່ເໝາະສົມ, ປະຕິບັດການອອກວິຊາກັບດ່ານໃຫ້ກວ້າງກວ່າເກົ່າ ພ້ອມທັງເອົາໃຈໃສ່ສ້າງແຜນພັດທະນາພື້ນຖານ ເພື່ອຮອງຮັບການພັດທະນາການທ່ອງທ່ຽວ.

**ມາດຕາ 25.** ມອບໃຫ້ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ຄົ້ນຄວ້າປັບປຸງນະໂຍບາຍ ແລະ ມາດຕະການຕ່າງໆ ໃນການຜັນຂະຫຍາຍກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ, ການແບ່ງ ແລະ ມອບສິດ, ໜ້າທີ່, ຄວາມຮັບຜິດຊອບ ລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ສອດຄ່ອງ, ລະອຽດ ແລະ ຈະແຈ້ງໃນການ

ຄຸ້ມຄອງເສດຖະກິດ-ສັງຄົມ; ສົມທົບກັບກະຊວງການເງິນ ແລະ ຫ້ອງການປັບປຸງທຸລະກິດ ຂອງສຳນັກງານນາຍົກລັດຖະມົນຕີ ຄົ້ນຄວ້ານະໂຍບາຍເງິນເດືອນຂອງພະນັກງານ ແລະ ກຳມະກອນຢູ່ຂົງເຂດລັດວິສາຫະກິດ ເພື່ອເຮັດໃຫ້ພະນັກງານ, ກຳມະກອນດັ່ງກ່າວ ມີລະດັບເງິນເດືອນທີ່ສົມເຫດສົມຜົນ.

**ມາດຕາ 26.** ມອບໃຫ້ອົງການຄຸ້ມຄອງທີ່ດິນແຫ່ງຊາດ ຈັດຕັ້ງສຳຫລວດຈັດສັນທີ່ດິນ , ຈັດແບ່ງເຂດ, ແບ່ງປະເພດ, ສ້າງແຜນນຳໃຊ້ທີ່ດິນ; ວາງແຜນຂອບຜັງເມືອງ ແລະ ຂອບເຂດທີ່ຢູ່ອາໃສ, ແຜນປົກປັກຮັກສາ ແລະ ນຳໃຊ້ທີ່ດິນ, ຊັບພະຍາກອນທຳມະຊາດ, ປົກປັກຮັກສາແຫລ່ງນ້ຳ, ຊີວະນາໆພັນ ແລະ ລະບົບນິເວດວິທະຍາຂອງປະເທດ ເພື່ອສະເຫນີລັດຖະບານ ພິຈາລະນາ ແລະ ຜ່ານສະພາຮັບຮອງເອົາ ຕາມກົດຫມາຍວ່າດ້ວຍທີ່ດິນ ແລະ ກົດຫມາຍອື່ນໆທີ່ກ່ຽວຂ້ອງ .

**ມາດຕາ 27.**ມອບໃຫ້ບັນດາກະຊວງ,ອົງການ, ແຂວງ ແລະ ເມືອງອີງໃສ່ພາລະບົດບາດຂອງຕົນຄົ້ນຄວ້າ ສ້າງລະບຽບການ, ມາດຕະການລະອຽດທີ່ສອດຄ່ອງ ເພື່ອປະຕິບັດນະໂຍບາຍ ແລະ ກົດຫມາຍທີ່ມີແລ້ວ ແລະນະໂຍບາຍເພີ່ມເຕີມ ທີ່ກຳນົດອອກໃນແຜນການປີ 2006-2007 ເພື່ອສ້າງເງື່ອນໄຂລະດົມ ແລະ ສົ່ງເສີມທຸກ ພາກສ່ວນເສດຖະກິດ ໃຫ້ເຂົ້າຮ່ວມໃນການລົງທຶນຜະລິດສິນຄ້າ ແລະ ບໍລິການ ໃນຂະແຫນງການ ແລະທ້ອງຖິ່ນຂອງຕົນ ທີ່ມີເງື່ອນໄຂອຳນວຍຄວາມສະດວກ.

**ມາດຕາ 28.** ໃຫ້ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ຄຜທ ແລະ ສະຖາບັນອື່ນໆ ດຳເນີນການ ຄົ້ນຄວ້າເພື່ອຮັບໃຊ້ ໃຫ້ແກ່ການຄຸ້ມຄອງເສດຖະກິດ-ສັງຄົມ ໂດຍມີການຈັດສຳມະນາ, ເຜີຍແຜ່ ແລກປ່ຽນບົດຮຽນລະຫວ່າງ ວິຊາການ ຂອງ ບັນດາຂະແໜງການຕ່າງໆ ເພື່ອໃຫ້ມີຂໍ້ມູນຂ່າວສານຮັບໃຊ້ໃຫ້ແກ່ການນຳ. ພ້ອມກັນນັ້ນ, ກໍໃຫ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້ານະໂຍບາຍປຸກລະດົມ ແລະ ນຳໃຊ້ປັນຍາຄວາມຮູ້, ບົດຮຽນທີ່ອຸດົມຮັ່ງມີຂອງຄົນລາວ ຈາກທຸກພາກສ່ວນ (ນັບທັງຢູ່ພາຍໃນ ແລະ ຄົນລາວທີ່ຮັກຊາດຢູ່ຕ່າງປະເທດ) ເພື່ອປະກອບສ່ວນຢ່າງຕັ້ງຫນ້າ ເຂົ້າໃນການຄົ້ນຄວ້າ, ສິດສອນ, ໃຫ້ຄຳປຶກສາ, ຝຶກອົບຮົມໃນສະຖາບັນສຶກສາ, ເວທີສຳມະນາ ແລະ ຮູບການອື່ນໆ ເພື່ອສ້າງກຳລັງແຮງສັງລວມ ໃນການພັດທະນາປະເທດຊາດ.

**ມາດຕາ 29.** ຫ້າມເດັດຂາດ ບໍ່ໃຫ້ຂະແຫນງການໃດ, ທ້ອງຖິ່ນໃດຫຼຸດຜ່ອນ ຫຼື ຍົກເວັ້ນພາສີອາກອນ ແລະ ຄ່າທຳນຽມທຸກປະເພດຕາມລຳພັງ. ທຸກການຍົກເວັ້ນ ຫຼື ຫຼຸດຜ່ອນພາສີອາກອນ ແລະ ພັນທະອື່ນໆ ຕໍ່ງົບປະມານແຫ່ງລັດ ແມ່ນລັດຖະບານເປັນຜູ້ຕົກລົງ ໂດຍຜ່ານການຄົ້ນຄວ້າ-ສະເໜີຂອງກະຊວງການເງິນ. ຖ້າຂະແໜງການໃດ ຫຼື ທ້ອງຖິ່ນໃດຫາກຝ່າຝືນ ແມ່ນຈະຖືກພິຈາລະນາດ້ານວິໄນຢ່າງເຂັ້ມງວດ. ຫ້າມບໍ່ໃຫ້ບຸກຄົນ ແລະ ການຈັດຕັ້ງ ເກັບຄ່າທຳນຽມ ແລະ ຄ່າບໍລິການທີ່ບໍ່ນອນຢູ່ໃນລະບຽບກົດໝາຍ. ບັນດາຂະແໜງການ ແລະ ທອ້ງຖິ່ນ ກ່ອນຈະອະນຸມັດເຊັນສັນຍາປະຕິບັດໂຄງການຕ່າງໆ ຕ້ອງໄດ້ຄຳນຶງເຖິງລະບຽບກົດໝາຍກ່ຽວກັບພາສີ, ສ່ວຍສາອາກອນ ແລະ ນະໂຍບາຍສົ່ງເສີມການລົງທຶນພາຍໃນ ແລະ ລົງທຶນຕ່າງປະເທດທີ່ໄດ້ປະກາດໃຊ້ແລ້ວ.

**ມາດຕາ 30.** ຫ້າມເດັດຂາດບໍ່ໃຫ້ຂະແໜງການໃດ, ທ້ອງຖິ່ນໃດປະຕິບັດໂຄງການທີ່ບໍ່ນອນໃນແຜນການ ທີ່ສະພາແຫ່ງຊາດອະນຸມັດ, ເປັນຕົ້ນ ແມ່ນໃຫ້ຢຸດຕິ ການໃຫ້ຫົວໜ່ວຍທຸລະກິດປະຕິບັດໂຄງການກ່ອນ ແລ້ວຈຶ່ງຂຶ້ນແຜນງົບປະມານຊໍາລະຕາມພາຍຫລັງ. ທຸກອົງການຈັດຕັ້ງທີ່ໄດ້ຮັບການເບີກຈ່າຍ ຈາກງົບປະມານຂອງລັດ ຕ້ອງປະຕິບັດຕາມຮ່ວງລາຍຈ່າຍຂອງແຜນງົບປະມານ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວຢ່າງເຂັ້ມງວດ.

**ມາດຕາ 31.** ມອບໃຫ້ຄະນະກໍາມະການແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງ ຂະແໜງການອື່ນໆ ສ້າງບົດແນະນໍາ ກ່ຽວກັບວິທີຈັດຕັ້ງປະຕິບັດດໍາລັດສະບັບນີ້ ແລະ ສ້າງແຜນດໍາເນີນງານລະອຽດດ້ານວິຊາສະເພາະ ທີ່ກ່ຽວຂ້ອງຂອງຕົນ ສໍາລັບສົກປີ 2006-2007 ນັບແຕ່ສູນກາງລົງຮອດທ້ອງຖິ່ນ. ພ້ອມກັນນັ້ນ ກໍ່ໃຫ້ເອົາໃຈໃສ່ການໂຄສະນາເຜີຍແຜ່ ຜ່ານລະບົບສື່ມວນຊົນຕ່າງໆ ນັບແຕ່ເດືອນສິງຫາ 2006 ເປັນຕົ້ນໄປ.

**ມາດຕາ 32.** ມອບໃຫ້ ກະຊວງຂະແໜງການ, ອົງການທຽບເທົ່າ, ນະຄອນຫລວງວຽງຈັນ, ແຂວງຕ່າງໆດໍາເນີນການສະຫຼຸບຕີລາຄາການຈັດຕັ້ງປະຕິບັດຂາດຕົວ ແຜນພັດທະນາເສດຖະກິດ-ສັງຄົມ ລວມທັງໂຄງການລົງທຶນຂອງລັດ ແລະ ແຜນງົບປະມານແຫ່ງລັດສົກປີ 2005-2006 ສົ່ງໃຫ້ ຄຜທ, ກະຊວງການເງິນ ແລະ ກະຊວງຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ກ່ອນວັນທີ 15 ມັງກອນ 2007; ເອົາໃຈໃສ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ໂຄງການລົງທຶນ ທີ່ສະພາຮັບຮອງເອົາໃນແຜນ 2006-2007 ໃຫ້ໄດ້ຮັບຜົນດີ, ພ້ອມທັງລາຍງານຜົນການຈັດຕັ້ງປະຕິບັດຂອງຕົນ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຊາບຢ່າງເປັນລະບົບ ຕາມວັນເວລາທີ່ໄດ້ກໍານົດ.

**ມາດຕາ 33.** ໃຫ້ແຕ່ລະກະຊວງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ອີງໃສ່ແຜນຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ ( ເປັນຕົ້ນແມ່ນ 11 ແຜນງານໃຫຍ່ຂອງລັດຖະບານ ), ແຜນພັດທະນາ 5 ປີ ( 2006-2010 ) ແລະ ຍຸດທະສາດ ຮອດ ປີ 2020 ຂອງຕົນ ຄົ້ນຄວ້າສ້າງເປັນເອກະສານໂຄງການລະອຽດ ເພື່ອໃຫ້ພາກສ່ວນປະເມີນຜົນຄົ້ນຄວ້າ ພິຈາລະນາກ່ຽວກັບປະສິດທິຜົນ ແລະ ຄວາມສາມາດເປັນໄປໄດ້ ຂອງໂຄງການແຕ່ຫົວທີ ເພື່ອນໍາສະເໜີເອົາເຂົ້າແຜນແຕ່ລະປີ, ໂດຍໃຫ້ປະຕິບັດຕາມຂັ້ນຕອນຂອງດໍາລັດ ເລກທີ 58/ນຍ ຢ່າງເຂັ້ມງວດ; ໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນຖືເອົາດໍາລັດສະບັບນີ້ ເປັນບ່ອນອີງເພື່ອສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານຂອງຕົນ ສໍາລັບສົກປີ 2007-2008 ແລະ ສາມາດສົ່ງເອກະສານໂຄງການລົງທຶນຂອງຕົນໃຫ້ພາກສ່ວນປະເມີນຜົນຄົ້ນຄວ້າ ນັບແຕ່ມື້ລົງລາຍເຊັນຂອງດໍາລັດສະບັບນີ້ເປັນຕົ້ນໄປ ຈົນເຖິງວັນທີ 30 / 04 / 2007. ໃນສົກປີ 2007-2008, ຖ້າໂຄງການໃດ ຫາກບໍ່ໄດ້ຮັບການຕີລາຄາ ແລະ ປະເມີນກ່ອນນັ້ນ ແມ່ນບໍ່ໃຫ້ ຄຜທ, ພາກສ່ວນແຜນການຂອງກະຊວງຂະແໜງການ ແລະ ພະແນກແຜນການ ແລະ ການລົງທຶນປະຈໍາທ້ອງຖິ່ນ ຈັດເຂົ້າໃນແຜນໂຄງການລົງທຶນຂອງລັດປະຈໍາປີ; ໃຫ້ ຄຜທ ຄົ້ນຄວ້າຈັດລຽງບູລິມະສິດ ຕາມຈໍານວນໂຄງການທີ່ໄດ້ປະເມີນຜົນແລ້ວເທົ່ານັ້ນ, ລັດຖະບານຈຶ່ງຈະຮັບພິຈາລະນາ. ທິດຈຸດສຸມໃນການນໍາໃຊ້ທຶນຈາກງົບປະມານຂອງລັດ ແມ່ນໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນເອົາໃຈໃສ່ດັ່ງນີ້: (1) ກໍານົດຈໍານວນໂຄງການ ແລະ ມູນຄ່າສໍາລັບໃຊ້ໜີ້ໂຄງການລົງທຶນ ບໍ່ໃຫ້ຫຼຸດ 30% ຂອງມູນຄ່າການລົງທຶນທັງໝົດ ດັ່ງທີ່ໄດ້ສະເໜີຢູ່ໃນມາດຕາ 4 (ສະເພາະຂະແໜງການທີ່ຍັງມີໜີ້ສິນຢ່າງຫຼວງຫຼາຍ) ; (2) ສ່ວນເຫຼືອນັ້ນ ແມ່ນໃຫ້ສຸມໃສ່ໂຄງການສືບຕໍ່

ທີ່ຈະສຳເລັດໃນສົກປີ 2007-2008 ເພື່ອໃຫ້ສາມາດໄດ້ນຳໃຊ້ຢ່າງມີປະສິດທິຜົນໂດຍໄວ; **(3)** ສຳລັບໂຄງການປະເພດ 3, ໃຫ້ຈັດເຂົ້າໃນແຜນຈັດຕັ້ງປະຕິບັດບໍ່ເກີນ 2 ປີຕາມດຳລັດ 58/ນຍ ທີ່ໄດ້ກຳນົດໄວ້. ຖ້າໂຄງການໃດຫາກປະຕິບັດກາຍ 2 ປີ ແມ່ນໃຫ້ຄົ້ນຄວ້າພິຈາລະນາຄືນໃໝ່ ຫຼື ໂຈະໄວ້ກ່ອນ; ໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນກຳນົດລະອຽດ ແລະ ສະເໜີໃຫ້ຊັດເຈນ ບັນດາໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອລ້າ ແລະ ທຶນກູ້ຢືມຈາກຕ່າງປະເທດ, ທຶນຈາກອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານ (NGOs) ແລະ ແຫຼ່ງທຶນອື່ນໆ (ທີ່ພວມຈັດຕັ້ງປະຕິບັດຢູ່ ແລະ ກະກຽມຈັດຕັ້ງປະຕິບັດໃນປີຕໍ່ໄປ), ຈະມີ ຫຼື ບໍ່ມີທຶນສົມທົບຂອງລັດຖະບານກໍ່ຕາມ ແລ້ວໃຫ້ບັນທຶກລົງໃສ່ຕາຕະລາງການລົງທຶນຂອງລັດທັງໝົດ ຄືກັນກັບທຶນພາຍໃນ ເພື່ອໃຫ້ ຄຜທ ມີບ່ອນອີງໃນການກຳນົດທຶນສົມທົບ, ສົມທຽບໃສ່ກັບບົດລາຍງານຂອງກະຊວງການຕ່າງປະເທດ ກ່ຽວກັບແຜນການນຳໃຊ້ທຶນຊ່ວຍເຫລືອລ້າ ແລະ ທຶນກູ້ຢືມປະຈຳປີ ແລະ ຕີລາຄາລວມກ່ຽວກັບຜົນຂອງການລົງທຶນຈາກທຸກໆແຫລ່ງທຶນໃນທົ່ວສັງຄົມໃຫ້ຊັດເຈນ ເພື່ອປັບປຸງຍຸດທະສາດການລົງທຶນຂອງລັດ ຖະບານໃຫ້ສອດຄ່ອງ ໃນແຕ່ລະໄລຍະ.

ມາດຕາ 34. ມອບໃຫ້ບັນດາທ່ານລັດຖະມົນຕີວ່າການກະຊວງ , ຫົວໜ້າອົງການທຽບເທົ່າ, ເຈົ້າຄອງນະຄອນຫຼວງ ແລະ ບັນດາເຈົ້າແຂວງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດ ໃຫ້ລັດຖະບານ ໃນແຕ່ລະໄລຍະຢ່າງເປັນປົກກະຕິ.

ມາດຕາ 35. ດຳລັດສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ວັນທີ 1 ຕຸລາ 2006 ເປັນຕົ້ນໄປ.

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ**